**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ແຜນການ ແລະ ການລົງທຶນ

ເລກທີ 0656/ກຜທ
ນະຄອນຫຼວງວຽງຈັນ,ວັນທີ 22 ເມສາ 2021

# ແຈ້ງການ

**ເຖິງ: ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າຫ້ອງການສູນສະຖິຕິແຫ່ງຊາດ, ຫົວໜ້າຫ້ອງການສົ່ງເສີມ ແລະຄຸ້ມຄອງເຂດເສດຖະກິດພິເສດ, ຫົວໜ້າຫ້ອງການຄະນະກຳມະການຮ່ວມມືລາວ-ຫວຽດ ນາມ, ຫົວໜ້າຫ້ອງການຄະນະກຳມະການຮ່ວມມືລາວ-ຈີນ ແລະ ຫົວໜ້າສູນຄົ້ນຄວ້ານະໂຍບາຍ ການພັດທະນາ.**

**ເລື່ອງ: ການຈັດຕັ້ງປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ເພື່ອຫຼຸດຜ່ອນຄວາມສ່ຽງຈາກການລະ ບາດ ຂອງພະຍາດໂຄວິດ 19 (COVID-19) ຕາມຄຳສັ່ງເລກທີ 15/ນຍ ຢູ່ ກະຊວງແຜນການ ແລະ ການລົງທຶນ.**

- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງ ແຜນການ ແລະການລົງທຶນ ສະບັບ ເລກທີ 201/ນຍ ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ຂໍ້ຕົກລົງຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກຜທ ວ່າດ້ວຍການແຕ່ງຕັ້ງຄະນະ ປະສານງານເພື່ອຕິດຕາມ ແລະ ປ້ອງກັນ ການແຜ່ລະບາດຂອງພະຍາດ COVID-19 ຢູ່ ກຜທ ສະບັບ ເລກທີ 0469/ກຜທ ລົງວັນທີ 20 ມີນາ 2020;
- ອີງຕາມກອງປະຊຸມຂອງຄະນະປະສານງານເພື່ອຕິດຕາມ ແລະ ປ້ອງກັນ ການແຜ່ລະບາດຂອງພະຍາດ COVID-19 ຢູ່ ກຜທ ຄັ້ງວັນທີ 22 ເມສາ 2021.

ກະຊວງແຜນການ ແລະການລົງທຶນ (ກຜທ) ຂໍແຈ້ງມາຍັງທ່ານຊາບວ່າ ປະຈຸບັນ ສະພາບການແຜ່ລະບາດ ຂອງເຊື້ອພະຍາດໂຄວິດ 19 (COVID-19) ໃນເດືອນເມສາ 2021 ສປປ ລາວ ໄດ້ກວດພົບຜູ້ຕິດເຊື້ອໃນຊຸມຊົນ ເພີ່ມຂຶ້ນຢ່າງໄວວາ ແລະມີຄວາມສ່ຽງທີ່ຈະມີການລະບາດໄປຫຼາຍແຂວງ ໃນທົ່ວປະເທດ; ທ່ານນາຍົກລັດຖະມົນຕີ ໄດ້ອອກຄຳສັ່ງ ເພື່ອຄວບຄຸມການແຜ່ລະບາດຂອງພະຍາດດັ່ງກ່າວ. ສະນັ້ນ, ເພື່ອຫຼຸດຜ່ອນຄວາມສ່ຽງຂອງ ພະນັກ ງານ ກຜທ ໃນການຕິດເຊື້ອ ແລະປະກອບສ່ວນໃຫ້ແກ່ມາດຕະການຂອງລັດຖະບານ, ກະຊວງແຜນການ ແລະ ການລົງທຶນ (ກຜທ) ຈຶ່ງແຈ້ງມາຍັງບັນດາທ່ານເພື່ອປະຕິບັດດັ່ງນີ້:

1. ໃຫ້ຫ້ອງການ, ກົມ ແລະ ສູນ ພາຍໃນ ກຜທ ຈັດຕັ້ງປະຕິບັດ ແລະຜັນຂະຫຍາຍຄຳສັ່ງ ຂອງທ່ານນາຍົກ ລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ຢ່າງເຂັ້ມງວດ.
2. ໃຫ້ຫ້ອງການ, ກົມ ແລະ ສູນ ພາຍໃນ ກຜທ ແບ່ງພະນັກງານທັງໝົດ ອອກເປັນ 2 ຈຸ ເພື່ອປ່ຽນກັນມາປະ ຈຳການເຮັດວຽກໃນແຕ່ລະອາທິດ (ຈຸໜຶ່ງເຮັດວຽກຢູ່ຫ້ອງການ ແລະອີກຈຸເຮັດວຽກຢູ່ເຮືອນ) ເພື່ອໃຫ້ ວຽກງານຂອງກະຊວງ ດຳເນີນໄປຢ່າງເປັນປົກກະຕິ. ໃຫ້ມີການຕິດຕາມຢ່າງເຂັ້ມງວດ ແລະຫ້າມເດັດຂາດບໍ່ ໃຫ້ພະນັກງານທີ່ເຮັດວຽກຢູ່ເຮືອນ ອອກຈາກບ້ານໄປເຮັດກິດຈະກຳອື່ນໆທີ່ມີຄວາມສ່ຽງ, ໃຫ້ມີການຕິດ ຕາມພະນັກງານມາປະຈຳການ ຫ້ອງການ ແລະພະນັກງານທີ່ເຮັດວຽກຢູ່ເຮືອນ ແລ້ວລາຍງານສະພາບການ

ຈັດຕັ້ງປະຕິບັດວຽກງານ ໃຫ້ຄະນະນໍາ ແລະຄະນະປະສານງານເພື່ອຕິດຕາມ ແລະປ້ອງກັນ ການແຜ່ລະບາດຂອງພະຍາດ COVID-19 ຢູ່ ກຜທ ຮັບຊາບທຸກໆມື້.

3. ໃຫ້ບັນດາກົມ ເພີ່ມທະວີການຕິດຕາມ ແລະລາຍງານການເຄື່ອນໄຫວ ແລະສຸຂະພາບ ຂອງພະນັກງານພາຍໃຕ້ການຄຸ້ມຄອງຂອງຕົນ ຕໍ່ຄະນະປະສານງານເພື່ອຕິດຕາມ ແລະປ້ອງກັນ ການແຜ່ລະບາດຂອງພະຍາດ COVID-19 ຂອງ ກຜທ. ຖ້າພົບກໍລະນີ ພະນັກງານມີຄວາມສ່ຽງໃນການສໍາພັດທາງກົງກັບຜູ້ຕິດເຊື້ອ, ໃຫ້ແນະນໍາຜູ້ກ່ຽວໄປພົບແພດໝໍໂດຍທັນທີ, ກັກກັນຕົນເອງ ແລະປະຕິບັດມາດຕະການຕ່າງໆ ຢ່າງເຄັ່ງຄັດ. ສໍາລັບກໍລະນີມີຄວາມສ່ຽງທາງອ້ອມ, ໃຫ້ຫົວໜ້າກົມພິຈາລະນາ ເຖິງຄວາມຈໍາເປັນໃນການພັກຕິດຕາມຕົນເອງຢູ່ເຮືອນ ແລະໃນກໍລະນີມີຄວາມຈໍາເປັນໃນການສືບຕໍ່ເຮັດວຽກ ແມ່ນໃຫ້ແນະນໍາຜູ້ ກ່ຽວເກັບກໍາຂໍ້ມູນການເຄື່ອນໄຫວຂອງຕົນນັບແຕ່ມື້ທີ່ສໍາພັດ (ທາງອ້ອມ) ກັບຜູ້ທີ່ຕິດເຊື້ອ, ເພີ່ມການປ້ອງກັນໃນໄລຍະການປະຕິບັດວຽກງານ ເປັນຕົ້ນສວມໜ້າກາກອະນາໄມ ແລະລ້າງມືເປັນປະຈໍາ, ຕິດຕາມອາການຕົນເອງ ແລະຖ້າມີອາການໃດໜຶ່ງຂອງພະຍາດດັ່ງກ່າວໃຫ້ໄປພົບແພດໝໍໂດຍທັນທີ.
4. ໃຫ້ບັນດາກົມ ເອົາໃຈໃສ່ໃນການສຶກສາອົບຮົມ ພະນັກງານທີ່ຕົນຮັບຜິດຊອບ ໃຫ້ມີຄວາມເຂົ້າໃຈທີ່ຖືກຕ້ອງຕໍ່ກັບອັນຕະລາຍຂອງພະຍາດ COVID-19, ວິທີປ້ອງການ, ແນະນໍາການດໍາລົງຊີວິດດ້ວຍຄວາມລະມັດລະວັງ ແລະບໍ່ປະໝາດ, ຫຼີກລ້ຽງການເຂົ້າຮ່ວມກິດຈະກໍາທາງສັງຄົມ ຫຼື ສະຖານທີ່ມີຄົນຈໍານວນຫຼວງຫຼາຍ ທີ່ຢູ່ໃນສະຖານທີ່ແອອັດ, ຫຼີກລ້ຽງການຈັດ ຫຼື ເຂົ້າຮ່ວມງານສັງສັນທີ່ມີຄົນເຂົ້າຮ່ວມຫຼາຍກວ່າ 20 ຄົນຂຶ້ນໄປ ທັງຢູ່ໃນ ແລະນອກສະຖານທີ່ເຮັດວຽກ;
5. ໃຫ້ເພີ່ມມາດຕະການປ້ອງການຄວາມສ່ຽງໃນການເຂົ້າ-ອອກ ກະຊວງ, ການເຮັດວຽກ ແລະການຈັດກອງປະຊຸມເຊັ່ນ:
   - ຕັ້ງຈຸດກວດອຸນນະພູມຜູ້ເຂົ້າ-ອອກ ກະຊວງ ໂດຍມອບໃຫ້ຄະນະປ້ອງກັນກະຊວງຂຶ້ນແຜນ ໃຫ້ມີພະນັກງານຈາກບັນດາກົມ, ຫ້ອງການ ແລະ ສູນ ປ່ຽນກັນປະຕິບັດໜ້າທີ່ກວດອຸນນະພູມ. ຖ້າກວດພົບພະນັກງານ ຫຼື ແຂກ ທີ່ມີອຸນນະພູມ 37,5 ອົງສາ ຂຶ້ນໄປ ໃຫ້ບັນທຶກລາຍລະອຽດ ແລະ ແນະນໍາໃຫ້ກັບໄປຕິດຕາມອາການຢູ່ເຮືອນ ຫຼື ໄປໂຮງໝໍ;
   - ເພີ່ມຈຸດຕັ້ງນໍ້າຢາລ້າງມືຂ້າເຊື້ອໃນຈຸດທີ່ມີຄົນຜ່ານຈໍານວນຫຼາຍ ແລະ ດ້ານໜ້າຂອງຫ້ອງປະຊຸມ;
   - ພົ່ນນໍ້າຢາຂ້າເຊື້ອ ແລະ/ຫຼື ໃຊ້ນໍາຢາຂ້າເຊື້ອເຊັດໂຕະ ໃນຫ້ອງປະຊຸມ ກ່ອນກອງປະຊຸມແຕ່ລະຄັ້ງ;
   - ຫລີກລ້ຽງການນັ່ງກິນເຂົ້າຮ່ວມກັນເປັນກຸ່ມ ແລະຖ້າຈໍາເປັນແມ່ນໃຫ້ນັ່ງຫ່າງກັນ ຢ່າງໜ້ອຍ 1 ແມັດ ແລະ ກິນອາຫານຂອງຕົນເອງໂດຍບໍ່ໃຊ້ບ່ວງ ແລະ ສ້ອມຮ່ວມກັນ;
   - ຮັກສາໄລຍະຫ່າງໃນການນັ່ງເຮັດວຽກ ແລະການນັ່ງປະຊຸມ ຢ່າງໜ້ອຍ 1 ແມັດ.
6. ໃຫ້ຫ້ອງການ ເປັນເຈົ້າການປະສານງານ ກັບ ກະຊວງສາທາລະນະສຸກ ໃນການສັກຢາວັກຊີນປ້ອງກັນໂຄວິດ 19 ໃຫ້ແກ່ພະນັກງານ ບັນດາກົມ, ຫ້ອງການ ແລະສູນ ພາຍໃນ ກຜທ ສໍາເລັດໂດຍໄວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ຮອງນາຍົກລັດຖະມົນຕີ,**
**ລັດຖະມົນຕີ**

ກະຊວງແຜນການແລະການລົງທຶນ
ລັດຖະມົນຕີ

**ສອນໄຊ ສີພັນດອນ**